# ຄູ່ມືເຮືອນຮົ່ມລານຕາກກາເຟຂອງ ຊຸມຊົນແກ້ວແສດ



ໃນໄລຍະເກັບກ່ຽວກາເຟ ເດືອນ ພະຈິກ - ກຸມພາ ພື້ນທີ່ແຂວງຊຽງຂວາງສ່ວນໃຫຍ່ແມ່ນມີອາກາດໜາວ ແລະ ຄວາມຊຸ່ມສູງປະມານ 70%, ເຊິ່ງເປັນສາເຫດເຮັດໃຫ້ການຕາກກາເຟບໍ່ແຫ້ງດີ ແລະ ເປັນເຊື້ອລາ, ດັ່ງນັ້ນການເຮັດລານຕາກກາເຟຈຶ່ງມີຄວາມຈຳເປັນຫຼາຍ.

ການເຮັດລານຕາກກາເຟມີທັງແບບທີ່ສ້າງດ້ວຍໄມ້ ແລະ ສ້າງດ້ວຍໂຄງເຫຼັກ, ໃນຄູ່ມືນີ້ຈະສະແດງໃຫ້ເຫັນການສ້າງລານຕາກກາເຟດ້ວຍເຫຼັກ, ເຊິ່ງມີທັງຈຸດດີ ແລະ ຈຸດອ່ອນແຕກຕ່າງກັນ

## ຈຸດດີ

- ເຮືອນຮົ່ມລານຕາກກາເຟເກັບຄວາມຊຸ່ມຕ່ຳອາກາດຖ່າຍເທດີ
- ເຮັດໃຫ້ອຸນຫະພູມໃນການຕາກສະໝ່ຳສະເໝີ




- ກາເຟຕາກແຫ້ງໄວ ແລະ ບໍ່ເກີດເຊື້ອລາ
- ເປີເຊັນການແຕກຂອງກາເຟເມັດຂາວຕ່ຳ
- ອາຍຸການນຳໃຊ້ຫຼາຍກວ່າ 10 ປີ



- ສາມາດຖອດໂຄງເຫຼັກເກັບຮັກສາໄດ້ໃນເວລາທີ່ນຳໃຊ້ແລ້ວ

## ຈຸດອ່ອນ

- ມູນຄ່າໃນການກໍ່ສ້າງສູງປະມານ 5-6 ລ້ານກີບ



- ເຫຼັກຂຶ້ນໝ້ຽງຕ້ອງໄດ້ທາສີທຸກໆ 2-3 ປີ



# ອຸປະກອນທີ່ນຳໃຊ້

ເຫຼັກຂະໜາດ 4 x 4 ຊັງຕີແມັດ (ສຳລັບຕັດຈອດເຮັດເສົາ, ໂຄງຫຼັງຄາ),
ເຫຼັກຂະໜາດ 6 x 3 ຊັງຕີແມັດ (ສຳລັບຕັດຈອດເຮັດຂອບລານຕາກ),
ເຫຼັກຂະໜາດ 2 x 2 (ສຳລັບຕັດເຮັດແນບ, ຕ່ອງຕາໜ່າງຢາງດຳພື້ນລານ)





ນ໋ອດສີບຍາວ 10 ສຳລັບຈັບຕາໜ່າງດຳພື້ນລານຕາກ



ຕາໜ່າງຢາງດຳຂະໜາດຮູ 4 ມິນລິແມັດ ກວ້າງ 90 ຊັງຕີແມັດ (ສຳລັບປູພື້ນລານຕາກກາເຟ)



ເຊືອກເບີ 4 (ສຳລັບມັດຜ້າຢາງ, ມັດເສີມຫຼັງຄາ ແລະ ພື້ນລານຕາກ)



ຜ້າຢາງໃສໜາ 0,08 ມິນລິແມັດ, ຂະໜາດ 4 x 13 ແມັດ (ສຳລັບມຸງເຮືອນຮົ່ມລານຕາກ)



ສີກັນໝ້ຽງ, ເກັບສີດິນຮອບຈອດ, ຕັດ



ສະກ໋ອດໃສ (ສຳລັບຕໍ່ຜ້າຢາງ ແລະ ຕິດຂອບລານຕາກ)

# ໂຄງສ້າງຂອງລານຕາກ

ໂຄງສ້າງເຫຼັກຂອງລານຕາກກາເຟແມ່ນແບ່ງອອກເປັນ 5 ສ່ວນປະກອບຄື: ໂຄງເຮືອນລານຕາກກາເຟ, ເຫຼັກຕໍ່ລະຫວ່າງເທິງຫຼັງຄາ, ເຫຼັກຕໍ່ລະຫວ່າງຫຼັງຄາດ້ານຂ້າງ, ເຫຼັກເກາະຂອບລານຕາກລະຫວ່າງຫ້ອງຕໍ່ຫ້ອງ, ເຫຼັກຈັບຕາໜ່າງ.



ໂຄງເຮືອນລານຕາກກາເຟ
ດ້ານໜ້າ



ໂຄງເຮືອນລານຕາກກາເຟ
ດ້ານໃນ

ເຫຼັກໂຕ່ງຕາໜ່າງ
2 x 2 ຊມ



ເຫຼັກຈັບຕາໜ່າງ 2 x 2 ຊມ





ເຫຼັກເກາະຂອບລານຕາກ
ລະຫວ່າງຫ້ອງຕໍ່ຫ້ອງແມ່ນໃຊ້ເຫຼັກ 6 x 3,
ຄວາມຍາວ 2 ແມັດ



ເຫຼັກຕໍ່ລະຫວ່າງເທິງຫຼັງຄາ
ແລະ ເຫຼັກຕໍ່ລະຫວ່າງຫຼັງຄາດ້ານຂ້າງ
ແມ່ນໃຊ້ເຫຼັກ 4 x 4, ຄວາມຍາວ 2 ແມັດ

- ລວງກວ້າງ 260 ຊມ
- ລວງສູງ 200 ຊມ
- ລວງກວ້າງສຳລັບລານຕາກ 80 ຊມ ທັງສອງດ້ານ
- ລວງກວ້າງສຳລັບທາງຍ່າງ 100 ຊມ







- ລວງຍາວປະມານ 10 ແມັດ
- ລວງສູງຈາກພື້ນດິນຫາ ຄານ 170 ຊມ
- ລວງສູງຈາກພື້ນດິນຫາ ລານຕາກ 80 ຊມ
- ເຫຼັກກົ່ງດ້ານຂ້າງ 30 ຊມ
- ເຫຼັກກົ່ງດ້ານໜ້າ 40 ຊມ

## ການມັດເຊືອກ ແລະ ຄຸມຜ້າຢາງ




ການມັດເຊືອກຊັ້ນທຳອິດແມ່ນໃຫ້ຫ່າງກັນປະມານ 50 ຊມ, ເພື່ອຕາໜ່າງແພຢາງ ແລະ ຕາໜ່າງລານຕາກ



ຫຼັງຈາກນັ້ນເອົາຜ້າຢາງມາຕັດເພື່ອຄຸມລານຕາກ ແລະ ຈົ່ງຜ້າຢາງໃຫ້ເຫຼືອ 60 ຊມ ເພື່ອເວລາຝົນຕົກສາມາດປ່ອຍລົງມາປົກໄດ້




ຮ້ອຍເຊືອກທັບອີກເທື່ອ
ໜຶ່ງໂດຍຫ່າງກັນ 100 ຊມ
ເພື່ອມັດແພຢາງບໍ່ໃຫ້ປີວ

## ການເກັບຮັກສາ

ພາຍຫຼັງສິ້ນສຸດລະດູການເກັບກາເຟແລ້ວ ສາມາດຖອດໂຄງຮ່າງຂອງລານຕາກກາເຟອອກ ແລ້ວເກັບຮັກສາໄວ້ໃນສາງ, ເພື່ອຫຼີກລ້ຽງການເກີດເປັນຂີ້ໝ້ຽງ ແລະ ນຳໃຊ້ໄດ້ດົນ



ສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ເວັບໄຊທ www.laocoffee.org

ວິດີໂອ: ເຮືອນຮົ່ມລານຕາກກາເຟຂອງຊຸມຊົນແກ່ວແສດ

ສະໜັບສະໜຸນໂດຍ:

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ LURAS Lao Upland Rural Advisory Service